## ການປູກເຫັດນາງລົມ

ເຫັດນາງລົມ ເປັນເຫັດທີ່ມີຄຸນຄ່າທາງອາຫານສູງ ໂດຍສະເພາະທາດໂປຼຕີນ, ທາດແປ້ງ ແລະ ວິຕາມິນບໍ່ນ້ອຍໜ້າກວ່າເຫັດຊະນິດອື່ນໆ. ເຫັດນາງລົມ ຍັງໃຫ້ປະລິມານແຮ່ທາດຫລາຍຊະນິດ ເຊັ່ນ: ແຄລຊຽມ, ຟອສຟໍຣັສ, ໂປແຕັສຊຽມ, ມີວິຕາມິນ ບີ 1 ແລະ ວິຕາມິນບີ 2 ຂ້ອນຂ້າງສູງກວ່າເຫັດຊະນິດອື່ນ ແລະ ໃຫ້ພະລັງງານຂ້ອນຂ້າງສູງ. ນອກນີ້, ເຫັດນາງລົມຍັງມີກົດໂຟລິກສູງກວ່າພືດຜັກ ແລະ ຊີ້ນສັດ ຊຶ່ງກົດພວກນີ້ ຈະຊ່ວຍປ້ອງກັນພະຍາດເລືອດຈາງ, ເໝາະສຳລັບຜູ້ປ່ວຍເປັນພະຍາດເບົາຫວານ, ຄວາມດັນເລືອດສູງ ແລະ ເປັນອາຫານທີ່ດີສຳລັບຜູ້ເປັນພະຍາດຫົວໃຈ ແລະ ກະເພາະອັກເສບ.

## ວັດຖຸອຸປະກອນທີ່ໃຊ້ປູກ

ວັດຖຸປະກອນທີ່ໃຊ້ປູກເຫັດນາງລົມປະກອບມີ:

- ⇒ ຢີບຊ່ຳ, ດີເກືອ ແລະ ພູໄມທ໌
- ⇒ ຮຳອ່ອນ ແລະ ເຂົ້າປຽນ
- ⇒ ຖົງຢາງຂະໜາດ 7 x 12 ນີ້ວ
- ⇒ ຢາງບ້ວງ
- ⇒ ຝ້າຍອັດປາກຖົງ
- ⇒ ເຈ້ຍອັດປາກຖົງ
- ⇒ ເຫລົ້າ 70% ແລະ 90%
- ⇒ ຊວ້ານ
- ⇒ ຄຸຕັກນ້ຳ
- ⇒ ບົວຫົດນ້ຳ
- ⇒ ຜ້າ
- ⇒ ຂີ້ເລື່ອຍໄມ້ເນື້ອອ່ອນ
- ⇒ ໝໍ້ໜຶ້ງຖົງກ້ອນເຊື້ອ
- ⇒ ຟືນ

## ສູດອາຫານທີ່ໃຊ້ປູກ

**ສູດທີ 1 :**

| | | |
|---|---|---|
| ⇒ | ຂີ້ເລື່ອຍໄມ້ເນື້ອອ່ອນ | 100 ກິໂລ |
| ⇒ | ຮຳອ່ອນ | 5 ກິໂລ |
| ⇒ | ແປ້ງເຂົ້າຈ້າວ ຫຼື ນ້ຳຕານຊາຍ | 3-5 ກິໂລ |
| ⇒ | ປູກຂາວ | 0ດ5-1 ກິໂລ |
| ⇒ | ດີເກືອ | 0,5 ກິໂລ |
| ⇒ | ນ້ຳ | 65-70 ລິດ |

**ສູດທີ 2**

| | | |
|---|---|---|
| ⇒ | ຂີ້ເລື່ອຍໄມ້ເນື້ອອ່ອນ | 100 ກິໂລກຼາມ |
| ⇒ | ຮຳອ່ອນ | 5-7 ກິໂລກຼາມ |
| ⇒ | ດີເກືອ | 0,2 ກິໂລກຼາມ |
| ⇒ | ປູນຂາວ | 1 ກິໂລກຼາມ |

## ການປະສົມຂີ້ເລື່ອຍເພື່ອປູກ

| | | |
|---|---|---|
| ⇒ | ນ້ຳ | 70-75% |

1. ນຳເອົາຂີ້ເລື່ອຍ ກອງເທິງພື້ນຊີມັງພ້ອມທັງອາຫານເສີມຕາມສູດ ໂດຍໃສ່ແບບກະຈາຍໃຫ້ທົ່ວ. ໃຊ້ຊວ້ານຄົນສ່ວນປະສົມໃຫ້ເຂົ້າກັນດີ.

2. ຕື່ມນ້ຳລົງໄປ ພ້ອມທັງຄົນໃຫ້ສະໝ່ຳສະເໝີ. ຈາກນັ້ນ, ຈຶ່ງທົດສອບເບິ່ງຄວາມຊຸ່ມຂອງຂີ້ເລື່ອຍໂດຍໃຊ້ມືກຳບີບເບິ່ງຖ້າເຫັນມີໄຫຼອອກຕາມງ່າມມື ສະແດງວ່າປຽກໂພດ ( ຄວນເອົາຂີ້ເລື່ອຍ ແລະ ອາຫານເສີມໃສ່ຕື່ມເລັກນ້ອຍ ) ແຕ່ຖ້າກຳເບິ່ງແລ້ວ ບໍ່ມີນ້ຳໄຫຼອອກມາ ແລະ ເມື່ອແບມືອອກເຫັນຂີ້ເລື່ອຍຊະອອກສະແດງວ່າແຫ້ງໂພດ ( ຄວນຕື່ມນ້ຳ ) ຂີ້ເລື່ອຍທີ່ເໝາະສົມຄື ເມື່ອເວລາກຳເບິ່ງຈະບໍ່ມີນ້ຳໄຫຼອອກມາ ແລະ ເມື່ອ

3.ນຳມາຮ່າຍໃສ່ຖົງຢາງ, ຍັດໃຫ້ແໜ້ນໃສ່ຄໍທີ່ປາກຖົງ, ອັດດ້ວຍເຈ້ຍໃຫ້ດີ ແລ້ວນຳໄປໜຶ້ງຂ້າເຊື້ອທີ່ໝໍ້ໜຶ້ງ ສຳລັບໜຶ້ງກ້ອນເຊື້ອ ປະມານ 3-4 ຊົ່ວໂມງ ( ສຳລັບ ໃຊ້ກະຝຸຍຂະໜາດ 200 ລິດ ໜຶ້ງ).

4. ເມື່ອໄດ້ທີ່ແລ້ວ ກໍນຳອອກມາປະໄວ້ໃຫ້ເຢັນ ຈຶ່ງນຳເອົາຫົວເຊື້ອ ທີ່ຕຽມໄວ້ມາໃສ່ ແລ້ວນຳໄປບົ່ມໄວ້ບ່ອນທີ່ມີອຸນຫະພູມສູງ ແລະ ມືດ ດົນປະມາ 3-4 ອາທິດ ເສັ້ນໄຍຈະເດີນເຕັມຖົງ. ຈາກນັ້ນ, ຄວນປະໄວ້ຕື່ມປະມານ 5-7 ມື້ ເພື່ອໃຫ້ເສັ້ນໄຍສະສົມອາຫານ ພ້ອມທີ່ຈະເປັນດອກຕໍ່ໄປ.

## ການເປີດປາກຖົງເພື່ອໃຫ້ເກີດດອກ

ການເປີດດອກເຫັດນາງລົມທີ່ນິຍົມ ຄື ການເປີດດ້ວຍວິທີການດຶງຄໍປາກຖົງ ແລະ ຝ້າຍອອກ ເໝືອນກັນການເປີດດອກເຫັດ



## ຄຸນຄ່າທາງອາຫານຂອງເຫັດນາງລົມປະກອບມີ:

⇒ **ປະກອບມີ:**

| | |
|---|---|
| – ຄວາມຊຸ່ມ | 56,1% |
| – ໂປຣຕີນ | 5,94% |
| – ໄຂມັນ | 0,17% |
| – ເຖົ່າ | 1,19໑ |
| – ເຍື້ອໄຍ | 1,56% |
| – ຄາໂບໄຮເດຼດ | 50,9% |

## ເຫັດນາງລົມ 100 ກຼາມ ຈະໃຫ້ພະລັງງານ ແລະ ແຮ່ທາດ ດັ່ງນີ້:

| | |
|---|---|
| – ພະລັງງານຄວາມຮ້ອນ | 45,65 ແຄລໍຣີ |
| – ແຄລຊຽມ | 8,9 ມິນລີກຼາມ |
| – ເຫຼັກ | 1,9 ມິນລີກຼາມ |
| – ຟອສຟໍຣັສ | 170,0 ມິນລີກຼາມ |

## ພະຍາດ ແລະ ແມງໄມ້ທີ່ມັກທຳລາຍເຫັດນາງລົມ ແລະ ວິທີການປ້ອງກັນກຳຈັດ

| | |
|---|---|
| – ວິຕາມິນ ບີ 1 | 10,15 ມິນລີກຼາມ |
| – ວິຕາມິນ ບີ 2 | 20,75 ມິນລີກຼາມ |
| – ວິຕາມິນຊີ | 12,40 ມິນລີກຼາ |

## ພະຍາດ

1. ຣາຂຽວ, ຣາດຳ ແລະ ຣາສີສົ້ມ

ນັບວ່າມີການທຳລາຍທຸກໄລຍະ ຕັ້ງແຕ່ໄລຍະເຮັດຫົວເຊື້ອຈົນເຖິງເປີດດອກ ເມື່ອພົບເຫັນມີການທຳລາຍຂອງເຊື້ອຣາ ຄວນຄັດອອກທຳລາຍ ດ້ວຍການເຜົາຖິ້ມ.

2. ຣາເມືອກ

ມີລັກສະນະສີເຫຼືອງໆຂຶ້ນຕາມຖົງກ້ອນເຊື້ອທີ່ມີອາຍຸຫຼາຍ ຫູຊຸ່ມເກີນໄປ ເມື່ອພົບເຫັນຄວນແຍກອອກໄປຝັງ ຫຼື ຈູດເຜົາຖິ້ມ.

## ແມງໄມ້

**1. ດ້ວງປີກແຂງ (Beetle)**

ຈະທຳລາຍທັ້ງທີ່ເປັນໂຕອ່ອນ ແລະ ໂຕເຕັມໄວ ໂດຍເຈາະສ່ວນທີ່ເປັນກ້ານດອກ ແລະ ໝວກດອກ ເຮັດໃຫ້ມີລັກສະນະຄ້າຍຄືຟອງນໍ້າແລ້ວຍຸບຕົວ.

**2. ແມງສາບ**

ຈະທຳລາຍດ້ວຍການກັດດອກ ເຮັດໃຫ້ເປັນແຜແຫວ່ງ ແລະ ເຮັດໃຫ້ຣາຕ່າງໆແຜ່ລະບາດຮຸນແຮງຂຶ້ນ

**3. ໝູ**

ມັກທຳລາຍເຫັດໃນໄລຍະຖົງກ້ອນເຊື້ອ ແລະ ເປີດດອກ ໂດຍກັດດອນຝ້າຍ, ຖົງ ແລະ ເຮັດໃຫ້ດອກເສຍຫາຍ.

ວິທະຍາໄລກະສິກຳ ແລະ ປ່າໄມ້ ພາກເໜືອ

# ການປູກເຫັດນາງລົມ





